ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ
ຄັງເງິນແຫ່ງຊາດ

ເລກທີ 4741 /ຄງຊ
ນະຄອນຫຼວງວຽງຈັນ, ວັນທີ 29 ກັນຍາ 2021

# ແຜນດຳເນີນງານ
## ກ່ຽວກັບ ການຜັນຂະຫຍາຍ ຄຳສັ່ງ ວ່າດ້ວຍ ການເພີ່ມທະວີ ການຄຸ້ມຄອງ ແລະ ຕ້ານການຮົ່ວໄຫຼ ຂອງລາຍຮັບງົບປະມານ ໄລຍະ 3 ປີ (2021-2023).

- ອີງຕາມ ຂໍ້ຕົກລົງວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄັງເງິນແຫ່ງຊາດ ສະບັບເລກທີ 2057/ ກງ ລົງວັນທີ 29 ເມສາ 2021;
- ອີງຕາມ ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍ ການຮັບຮອງເອົາວາລະແຫ່ງຊາດ ກ່ຽວກັບ ການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ສະບັບເລກທີ 03/ສພຊ, ລົງວັນທີ 10 ສິງຫາ 2021;
- ອີງຕາມ ຄຳສັ່ງ ວ່າດ້ວຍ ການເພີ່ມທະວີການຄຸ້ມຄອງ ແລະ ຕ້ານການຮົ່ວໄຫຼ ຂອງລາຍຮັບງົບປະມານ ສະບັບເລກທີ 18/ນຍ, ລົງວັນທີ 16 ກັນຍາ 2021.

1. ຈຸດປະສົງ:

ເພື່ອຈັດຕັ້ງຜັນຂະຫຍາຍ ມະຕິກອງປະຊຸມສະພາແຫ່ງຊາດ ກ່ຽວກັບການຮັບຮອງເອົາທິດທາງແຜນງົບປະມານແຫ່ງລັດ 5 ປີ (2021-2025) ແລະ ປະຕິບັດວາລະແຫ່ງຊາດ ໃນການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ; ເພື່ອສ້າງຄວາມເປັນເອກະພາບລະດັບສູງ ໃນການເພີ່ມທະວີການຄຸ້ມຄອງ ແລະ ຕ້ານການຮົ່ວໄຫຼຂອງລາຍຮັບງົບປະມານແຫ່ງລັດ ໃນຄວາມຮັບຜິດຊອບຂອງຄັງເງິນແຫ່ງຊາດ ໃນຂອບເຂດທົ່ວປະເທດ.

2. ລະດັບຄາດໝາຍ:

- ເພື່ອຮັບປະກັນການຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍມະຕິກອງປະຊຸມສະພາແຫ່ງຊາດ ໃນການຄຸ້ມຄອງງົບປະມານແຫ່ງລັດ ແລະ ປະຕິບັດວາລະແຫ່ງຊາດ ດ້ານເສດຖະກິດ-ການເງິນ ໃຫ້ມີຄວາມສົມດູນ ລະຫວ່າງລາຍຮັບ-ລາຍຈ່າຍງົບປະມານ ໂປ່ງໃສ, ຍຸຕິທຳ ແລະ ສາມາດກວດສອບໄດ້;
- ຕັ້ງໜ້າສູ້ຊົນ, ປັບປຸງວຽກງານຄັງເງິນ ແນ່ໃສ່ເຮັດໃຫ້ຂະແໜງຄັງເງິນທັນເປັນທັນສະໄໝ ໃນການຄຸ້ມຄອງລາຍຮັບງົບປະມານ ແລະ ຈັດຕັ້ງປະຕິບັດລາຍຈ່າຍງົບປະມານ ໃຫ້ສາມາດຕອບສະໜອງລາຍຈ່າຍທີ່ເປັນບຸລິມະສິດຂອງລັດຖະບານໃນແຕ່ໄລຍະ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
- ພັດທະນາ ແລະ ປະຕິຮູບວຽກງານຄັງເງິນ ທັນເປັນທັນສະໄໝ ແລະ ສາມາດເຊື່ອມຕໍ່ກັບ ຂະແໜງລາຍຮັບ, ທະນາຄານທີ່ໃຫ້ບໍລິການ ແລະ ຫົວໜ່ວຍງົບປະມານ ເພື່ອແນ່ໃສ່ຮັບປະກັນການລວມສູນທຸກແຫຼ່ງເງິນຂອງລັດຜ່ານລະບົບຄັງເງິນ ໃນຂອບເຂດທົ່ວປະເທດ.

3. ການຈັດຕັ້ງປະຕິບັດວຽກງານຄັງເງິນ ທີ່ຕິດພັນກັບການຜັນຂະຫຍາຍ ຄຳສັ່ງວ່າດ້ວຍ ການເພີ່ມທະວີການຄຸ້ມຄອງ ແລະ ຕ້ານການຮົ່ວໄຫຼ ຂອງລາຍຮັບງົບປະມານແຫ່ງລັດ.

+ ປີ 2021 ງວດ 4 ( ເດືອນ 10-12 ) :

- ສືບຕໍ່ ເຜີຍແຜ່ ຄຳສັ່ງຂອງ ທ່ານນາຍົກລັດຖະມົນຕີ ສະບັບເລກທີ 18/ນຍ, ລົງວັນທີ 16 ກັນຍາ 2021 ວ່າດ້ວຍ ການເພີ່ມທະວີການຄຸ້ມຄອງ ແລະ ຕ້ານການຮົ່ວໄຫຼຂອງ ລາຍຮັບງົບປະມານແຫ່ງລັດ ໃຫ້ພະນັກງານ-

ລັດຖະກອນຄັງເງິນແຫ່ງຊາດ ໃຫ້ມີຄວາມຮັບຮູ້ເຂົ້າໃຈຢ່າງເລິກເຊິ່ງ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມໜ້າທີ່ຄວາມຮັບຜິດຊອບຂອງຕົນ;

- ຄົ້ນຄວ້າ ສ້າງ ແລະ ປັບປຸງ ຄໍາແນະນໍາ ວ່າດ້ວຍ ການຄຸ້ມຄອງບັນຊີເງິນຝາກຄັງເງິນ ທີ່ຕິດພັນກັບການຄຸ້ມຄອງລາຍຮັບ ແລະ ປະຕິບັດລາຍຈ່າຍ ທາງດ້ານວິຊາການ; ການຄຸ້ມຄອງແຫຼ່ງເງິນຂອງຫົວໜ່ວຍງົບປະມານຜ່ານລະບົບຄັງເງິນ;
- ສືບຕໍ່ ປັບປຸງ ແລະ ພັດທະນາລະບົບການຄຸ້ມຄອງຂໍ້ມູນຂ່າວສານການເງິນພາກລັດ ໃນໄລຍະສະເພາະໜ້າ (ໄລຍະຂ້າມຜ່ານ) ໂດຍຮ່ວມກັບບໍລິສັດຜູ້ພັດທະນາ ໃນການປັບປຸງລະບົບ GFIS ເປັນລະບົບ GFIS+ ເປັນລະບົບເວບເພຈ ໃຫ້ສາມາດຕິດຕາມ ແລະ ຕອບສະໜອງ ການຄຸ້ມຄອງການເງິນພາກລັດ ພ້ອມທັງສາມາດດໍາເນີນການເຊື່ອມຕໍ່ໂດຍກົງກັບລະບົບຂໍ້ມູນຂ່າວສານຄັງເງິນ ( ລະບົບ RTIS )ໃນຮູບແບບທັນສະໄໝ ເພື່ອໃຫ້ບັນດາຄັງເງິນແຫ່ງຊາດ, ຄັງເງິນປະຈໍາແຂວງ-ເມືອງ ສາມາດຕິດຕາມ ແລະ ຄຸ້ມຄອງລາຍຮັບ-ຈ່າຍງົບປະມານແຫ່ງລັດ ຮັບປະກັນການສ້າງ ແລະ ສະຫລຸບລາຍງານການຈັດຕັ້ງປະຕິບັດງົບປະມານ ແບບ Auto Real Time, ສາມາດເຊື່ອມຕໍ່ ໂດຍກົງກັບລະບົບຄຸ້ມຄອງລາຍຮັບສ່ວຍສາອາກອນ (Tax RIS) ແລະ ລະບົບການແຈ້ງພາສີເປັນລາຍລະອຽດແບບເອເລັກໂຕນິກ (ASYCUDA), ການເຊື່ອມຕໍ່ລະບົບແຈ້ງພາສີປະຕູດຽວ (LNSW) ແລະ ຊໍາລະຜ່ານລະບົບທະນາຄານ ເຮັດໃຫ້ການສະຫຼຸບລາຍງານ ມີຄວາມຊັດເຈນ ແລະ ທັນກໍານົດເວລາ;
- ສືບຕໍ່ຜັນຂະຫຍາຍລະບົບ RTIS ໃຫ້ສໍາເລັດຕື່ມອີກ 40 ເມືອງ, ລວມບັນດາເມືອງທີ່ໄດ້ຈັດຕັ້ງປະຕິບັດໃນປີຜ່ານມາ 65 ເມືອງ; ລວມທັງໝົດ 105 ເມືອງໃນຂອບເຂດທົ່ວປະເທດ ໂດຍຜັນຂະຫຍາຍຮ່ວມກັບລະບົບ TaxRIS ຂອງຂະແໜງສ່ວຍສາອາກອນ;
- ສືບຕໍ່ປັບປຸງລະບົບ RTIS ເພື່ອຮອງຮັບການຕິດຕາມ ແລະ ຄຸ້ມຄອງລາຍຮັບ ແລະ ລາຍຈ່າຍ ງົບປະມານແຫ່ງລັດ ໃຫ້ລວມສູນທຸກແຫລ່ງເງິນຢູ່ຂັ້ນສູນກາງ ແລະ ຕອບສະໜອງການຈັດສັນ ການແບ່ງຂັ້ນຄຸ້ມຄອງລະຫວ່າງສູນກາງ ແລະ ທ້ອງຖິ່ນ ຢ່າງມີປະສິດທິພາບ ແລະ ທັນກໍານົດເວລາ;
- ສືບຕໍ່ພັດທະນາລະບົບ RTIS ເພື່ອຮອງຮັບການແຈ້ງມອບລາຍຮັບບໍລິຫານທາງດ້ານວິຊາການ ເຂົ້າເປັນລາຍຮັບງົບປະມານແຫ່ງລັດ ໂດຍນໍາໃຊ້ APP ມືຖື ແລະ ສາມາດດໍາເນີນການແຈ້ງມອບລາຍຮັບງົບປະມານຜ່ານລະບົບ TaxRIS ໂດຍກົງ;
- ຈັດຝຶກອົບຮົມ ກ່ຽວກັບ ການຄຸ້ມຄອງ, ນໍາໃຊ້ ລະບົບຂໍ້ມູນຂ່າວສານຄັງເງິນ (ລະບົບ RTIS ) ເພື່ອຕິດຕາມ, ບັນທຶກບັນຊີ ແລະ ສະຫລຸບລາຍງານລາຍຮັບ-ລາຍຈ່າຍງົບປະມານ ໃຫ້ພະນັກງານ-ລັດຖະກອນ ຄັງເງິນ ປະຈໍາແຂວງ-ເມືອງ ໃນຂອບເຂດທົ່ວປະເທດ;
- ກວດກາ, ຊຸກຍູ້ ແລະ ປະສານສົມທົບກັບບັນດາຂະແໜງລາຍຮັບ ແລະ ທະນາຄານທຸລະກິດ ທີ່ໃຫ້ບໍລິການເພື່ອສົມທຽບຕົວເລກການປະຕິບັດລາຍຮັບງົບປະມານ ໃຫ້ຮຽບຮ້ອຍແກ້ໄຂ ແລະ ສະສາງບັນຊີລາຍການຮັບລໍຖ້າຈັດສັນ ແລະ ສະສາງ (ບັນຊີ 547)ໃຫ້ສໍາເລັດໃນເດືອນ. ກໍລະນີ ເນື້ອໃນລາຍການຮັບບໍ່ຊັດເຈນ ແມ່ນບັນທຶກເປັນລາຍຮັບອື່ນ ແລ້ວຈຶ່ງດໍາເນີນໄລ່ລຽງ ແລະ ດັດແກ້ ຕາມເນື້ອໃນລາຍຮັບງົບປະມານໃນທ້າຍເດືອນ;
- ດໍາເນີນການກວດກາ ແລະ ສັງລວມຕົວເລກການເຄື່ອນໄຫວບັນຊີເງິນຝາກຄັງເງິນ ບ້ວງລາຍຮັບວິຊາການ ເພື່ອສັງລວມສົ່ງຂະແໜງສ່ວຍສາອາກອນ ແລະ ປະສານຫົວໜ່ວຍງົບປະມານ ເພື່ອດໍາເນີນການແຈ້ງມອບເປັນລາຍຮັບງົບປະມານໃນແຕ່ລະເດືອນ;

- ສືບຕໍ່ ລົງຊຸກຍູ້, ຕິດຕາມ ແລະ ແນະນຳ ຄັງເງິນປະຈຳ 9 ເມືອງ ທີ່ຂຶ້ນກັບນະຄອນຫລວງ ເພື່ອຫັນການແຈ້ງມອບຜ່ານລະບົບ TaxRIS ແລະ ຊຳລະຜ່ານລະບົບທະນະຄານ ທັງໝົດ, ຫລີກເວັ້ນ ແລະ ຢຸດຕິ ການຮັບເງິນເປັນເງິນສົດ ທີ່ເປັນຈຳນວນຫລວງຫລາຍໃຫ້ຫລຸດລົງ;
- ສືບຕໍ່ ປັບປຸງ, ຈັດວາງ ແລະ ສັບຊ້ອນ ພະນັກງານ-ລັດຖະກອນ ຂະແໜງຄັງເງິນ ໃຫ້ຖືກຕ້ອງຕາມຂໍ້ຕົກລົງສະບັບເລກທີ 2057/ກງ ໂດຍສະເພາະ ຕຳແໜ່ງງານ ຂັ້ນ ຫົວໜ້າ, ຮອງຫົວໜ້າຂະແໜງ ຂອງຄັງເງິນປະຈຳແຂວງ ແລະ ຫົວໜ້າ ຄັງເງິນປະຈຳເມືອງ-ໜ່ວຍງານຄັງເງິນເມືອງ ໃຫ້ສຳເລັດໃນຂອບເຂດທົ່ວປະເທດ.

**+ ປີ 2022 ງວດ 1 ( ເດືອນ 1-3 ) :**

- ຄົ້ນຄວ້າ ສ້າງ ແລະ ປັບປຸງ ຄຳແນະນຳ ວ່າດ້ວຍ ການລະດົມທຶນໄລຍະສັ້ນຜ່ານທະນາຄານແຫ່ງ ສປປ ລາວ ແລະ ຕະຫຼາດຫຼັກຊັບ ;
- ສືບຕໍ່ປະສານສົມທົບກັບຂະແໜງສ່ວຍສາອາກອນ ເພື່ອຜັນຂະຫຍາຍ, ຕິດຕັ້ງ ແລະ ນຳໃຊ້ ການແຈ້ງລາຍຮັບຢູ່ບັນດາຈຸດບໍລິການຮັບເງິນ ( ຂະແໜງໂຍທາ ແລະ ຊັບພະຍາກອນ ) ເພື່ອນຳໃຊ້ໃນການຄຸ້ມຄອງການແຈ້ງ ແລະ ມອບລາຍຮັບງົບປະມານ ລວມທັງລາຍຮັບຈາກ ຄ່າທຳນຽມ ແລະ ຄ່າບໍລິການ ໃຫ້ຖືກຕ້ອງຕາມນິຕິກຳທີ່ໄດ້ກຳນົດໄວ້ ໂດຍຜ່ານລະບົບ TaxRIS ແລະ ຊຳລະຜ່ານເຄື່ອງມືທັນສະໄໝ ເພື່ອຫັນເປັນເທັກໂນໂລຊີການສື່ສານແບບໃໝ່ ເປັນຕົ້ນ ລະບົບ Mobile-Banking, M-Money, U-Money ແລະ ອື່ນໆ; ໂດຍເລີ່ມການທົດລອງຈັດຕັ້ງປະຕິບັດຢູ່ນະຄອນຫລວງວຽງຈັນ;
- ສືບຕໍ່ປັບປຸງລະບົບ RTIS ເພື່ອຮອງຮັບການຕິດຕາມ ແລະ ຄຸ້ມຄອງລາຍຮັບ ແລະ ລາຍຈ່າຍ ງົບປະມານແຫ່ງລັດ ໃຫ້ລວມສູນທຸກແຫລ່ງເງິນຢູ່ຂັ້ນສູນກາງ ແລະ ຕອບສະໜອງການຈັດສັນ ການແບ່ງຂັ້ນຄຸ້ມຄອງລະຫວ່າງສູນກາງ ແລະ ທ້ອງຖິ່ນ ຢ່າງມີປະສິດທິພາບ ແລະ ທັນກຳນົດເວລາ;
- ປັບປຸງ ແລະ ຜັນຂະຫຍາຍ ລະບົບ RTIS ເພື່ອນຳໃຊ້ການຄຸ້ມຄອງ, ຕິດຕາມ ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການຕ່າງໆ ຢູ່ບັນດາດ່ານປະເພນີ ທີ່ບໍ່ມີ ສາຂາ ຫລື ໜ່ວຍບໍລິການ ຂອງທະນາຄານຕັ້ງຢູ່ ໂດຍນຳໃຊ້ຜະລິດຕະພັນ U-Money ຂອງບໍລິສັດສະຕາຟິນເທັກ ;
- ສືບຕໍ່ ດຳເນີນການກວດກາ ແລະ ສັງລວມຕົວເລກການເຄື່ອນໄຫວບັນຊີເງິນຝາກຄັງເງິນ ບ້ວງລາຍຮັບວິຊາການ ເພື່ອສັງລວມສົ່ງຂະແໜງສ່ວຍສາອາກອນ ແລະ ປະສານຫົວໜ່ວຍງົບປະມານ ເພື່ອດຳເນີນການແຈ້ງມອບເປັນລາຍຮັບງົບປະມານໃນແຕ່ລະເດືອນ;
- ກວດກາ, ຕິດຕາມ ແລະ ໄລ່ລຽງ ບັນດາບັນຊີເງິນຝາກບ້ວງລາຍຮັບວິຊາການ ຂອງບັນດາຫົວໜ່ວຍງົບປະມານ ທີ່ມີການເຄື່ອນໄຫວເກີດຂຶ້ນ ແລະ ມີຍອດເຫລືອເງິນໃນບັນຊີເງິນຝາກຄັງເງິນ ເພື່ອມອບເຂົ້າເປັນລາຍຮັບງົບປະມານແຫ່ງລັດ ຕາມແຜນ, ດຳເນີນການປະຕິບັດລາຍຈ່າຍງົບປະມານແຫ່ງລັດ ຕາມຂັ້ນຕອນປົກກະຕິ;
- ກວດກາ, ຊຸກຍູ້ ແລະ ປະສານສົມທົບກັບບັນດາຂະແໜງລາຍຮັບ ແລະ ທະນາຄານທຸລະກິດ ທີ່ໃຫ້ບໍລິການ ເພື່ອສົມທຽບຕົວເລກການປະຕິບັດລາຍຮັບງົບປະມານ ໃຫ້ຮີບຮ້ອນແກ້ໄຂ ແລະ ສະສາງບັນຊີລາຍການຮັບລໍຖ້າຈັດສັນ ແລະ ສະສາງ (ບັນຊີ 547) ໃຫ້ສຳເລັດໃນເດືອນ. ກໍລະນີ ເນື້ອໃນລາຍການຮັບບໍ່ຊັດເຈນ ແມ່ນບັນທຶກເປັນລາຍຮັບອື່ນ ແລ້ວຈຶ່ງດຳເນີນການໄລ່ລຽງ ແລະ ດັດແກ້ບັນຊີ ຕາມເນື້ອໃນລາຍຮັບງົບປະມານເກີດຂຶ້ນຕົວຈິງໃນທ້າຍເດືອນ;
- ສືບຕໍ່ ຕິດຕາມ, ກວດກາ, ສັງລວມ ແລະ ປະສານສົມທົບກັບບັນດາຫົວໜ່ວຍງົບປະມານ, ຄັງເງິນ ປະຈຳທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງ ເພື່ອຄົ້ນຄວ້າປັບປຸງມາດຕະຖານ ແລະ ວິທີແກ້ໄຂ ບັນດາບັນຫາທີ່ເປັນຂໍ້ຄົງຄ້າງ ທີ່ຕິດພັນກັບບົດບັນທຶກຜົນການກວດສອບ ແຕ່ລະປີ ໃຫ້ທ້ອງທ່າຫລຸດລົງ ແລະ ກ້າວໄປສູ່ການແກ້ໄຂສຳເລັດຂາດຕົວ;

- ສືບຕໍ່ ປັບປຸງ, ຈັດວາງ ແລະ ສັບຊ້ອນ ພະນັກງານ-ລັດຖະກອນ ຂະແໜງຄັງເງິນ ໃຫ້ຖືກຕ້ອງຕາມຂໍ້ຕົກລົງສະບັບເລກທີ 2057/ກງ ໂດຍສະເພາະ ຕຳແໜ່ງງານ ຂັ້ນ ຫົວໜ້າ, ຮອງຫົວໜ້າຂະແໜງ ຂອງຄັງເງິນປະຈຳແຂວງ ແລະ ຫົວໜ້າ ຄັງເງິນປະຈຳເມືອງ-ໜ່ວຍງານຄັງເງິນເມືອງ ໃຫ້ສຳເລັດໃນຂອບເຂດທົ່ວປະເທດ

**+ ປີ 2022 ງວດ 2 ( ເດືອນ 4-6 ) :**

- ກວດກາ ແລະ ໄລ່ລຽງ ບັນດາບັນຊີເງິນຝາກບ້ວງເງິນງົບປະມານ ແລະ ບ້ວງລາຍຮັບວິຊາການ ຂອງບັນດາຫົວໜ່ວຍງົບປະມານ ທີ່ມີຍອດເຫລືອເງິນໃນບັນຊີເງິນຝາກຄັງເງິນ ໃນຂອບເຂດທົ່ວປະເທດ ເພື່ອສະສາງເຂົ້າເປັນລາຍຮັບງົບປະມານແຫ່ງລັດ ຕາມກົດໝາຍກຳນົດໄວ້;
- ສືບຕໍ່ປະສານສົມທົບກັບຂະແໜງສ່ວຍສາອາກອນ ເພື່ອຜັນຂະຫຍາຍ, ຕິດຕັ້ງ ແລະ ນຳໃຊ້ ການແຈ້ງລາຍຮັບຢູ່ບັນດາຈຸດບໍລິການຮັບເງິນ ຂອງບັນດາແຂວງ( ຂະແໜງໂຍທາ ແລະ ຊັບພະຍາກອນ ) ເພື່ອນຳໃຊ້ໃນການຄຸ້ມຄອງການແຈ້ງ ແລະ ມອບລາຍຮັບງົບປະມານ ລວມທັງລາຍຮັບຈາກ ຄ່າທຳນຽມ ແລະ ຄ່າບໍລິການ ໃຫ້ຖືກຕ້ອງຕາມນິຕິກຳທີ່ໄດ້ກຳນົດໄວ້ ໂດຍຜ່ານລະບົບ TaxRIS ແລະ ຊຳລະຜ່ານເຄື່ອນມືທັນສະໄໝ ເພື່ອທັນເປັນເທັກໂນໂລຊີການສື່ສານແບບໃໝ່ ເປັນຕົ້ນ ລະບົບ Mobile-Banking, M-Money, U-Money ແລະ ອື່ນໆ ໂດຍສືບຕໍ່ຈັດຕັ້ງຜັນຂະຫຍາຍຢູ່ບັນດາແຂວງ ໃນຂອບເຂດທົ່ວປະເທດ;
- ສືບຕໍ່ ຕິດຕາມ, ແນະນຳ ແລະ ກວດກາ ການຈັດຕັ້ງປະຕິບັດການນຳໃຊ້ລະບົບ RTIS ແລະ ໃບບິນຮັບເງິນຂອງຄັງເງິນ ຜ່ານລະບົບທະນາຄານ ເພື່ອຕິດຕາມ ແລະ ຄຸ້ມຄອງລາຍຮັບ ແລະ ລາຍຈ່າຍ ງົບປະມານແຫ່ງລັດໃຫ້ລວມສູນທຸກແຫລ່ງເງິນຢູ່ຂັ້ນສູນກາງ ແລະ ຕອບສະໜອງການຈັດສັນ ການແບ່ງຂັ້ນຄຸ້ມຄອງລະຫວ່າງສູນກາງ ແລະ ທ້ອງຖິ່ນ ໃຫ້ເປັນເອກະພາບໃນຄອບເຂດທົ່ວປະເທດ;
- ສືບຕໍ່ ດຳເນີນການກວດກາ ແລະ ສັງລວມຕົວເລກການເຄື່ອນໄຫວບັນຊີເງິນຝາກຄັງເງິນ ບ້ວງລາຍຮັບວິຊາການ ເພື່ອສັງລວມສົ່ງຂະແໜງສ່ວຍສາອາກອນ ແລະ ປະສານຫົວໜ່ວຍງົບປະມານ ເພື່ອດຳເນີນການແຈ້ງມອບເປັນລາຍຮັບງົບປະມານໃນແຕ່ລະເດືອນ;
- ສືບຕໍ່ ລົງຊຸກຍູ້, ຕິດຕາມ ແລະ ແນະນຳ ຄັງເງິນປະຈຳເມືອງ ແລະ ໜ່ວຍງານຄັງເງິນເມືອງ ເພື່ອທັນການແຈ້ງມອບຜ່ານລະບົບ TaxRIS ແລະ ຊຳລະຜ່ານລະບົບທະນາຄານ, ສຳລັບ ບັນດາເມືອງທີ່ບໍ່ມີໜ່ວຍບໍລິການຂອງທະນາຄານທຸລະກິດ ແມ່ນຫັນມານຳໃຊ້ການບໍລິການຂອງທະນາຄານນະໂຍບາຍ ຫລື ຊຳລະຜ່ານເຄື່ອງມືທັນສະໄໝ ເພື່ອຫັນເປັນເທັກໂນໂລຊີການສື່ສານແບບໃໝ່ ເປັນຕົ້ນ ລະບົບ Mobile-Banking, M-Money, U-Money ແລະ ອື່ນໆ ເພື່ອຢຸດຕິການຮັບເງິນເປັນເງິນສົດ.
- ກວດກາ, ຊຸກຍູ້ ແລະ ປະສານສົມທົບກັບບັນດາຂະແໜງລາຍຮັບ ແລະ ທະນາຄານທຸລະກິດ ທີ່ໃຫ້ບໍລິການເພື່ອສົມທຽບຕົວເລກການປະຕິບັດລາຍຮັບງົບປະມານ ເພື່ອຮີບຮ້ອນແກ້ໄຂ ແລະ ສະສາງບັນຊີລາຍການຮັບລໍຖ້າຈັດສັນ ແລະ ສະສາງ (ບັນຊີ 547) ໃຫ້ສຳເລັດໃນເດືອນ. ກໍລະນີ ເນື້ອໃນລາຍການຮັບບໍ່ຊັດເຈນ ແມ່ນບັນທຶກເປັນລາຍຮັບອື່ນ ແລ້ວຈິ່ງດຳເນີນການໄລ່ລຽງ ແລະ ດັດແກ້ບັນຊີ ຕາມເນື້ອໃນລາຍຮັບງົບປະມານເກີດຂຶ້ນຕົວຈິງໃນທ້າຍເດືອນ;
- ສືບຕໍ່ ຕິດຕາມ, ກວດກາ, ສັງລວມ ແລະ ປະສານສົມທົບກັບບັນດາຫົວໜ່ວຍງົບປະມານ, ຄັງເງິນ ປະຈຳທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງ ເພື່ອຄົ້ນຄວ້າປັບປຸງມາດຕະຖານ ແລະ ວິທີແກ້ໄຂ ບັນດາບັນຫາທີ່ເປັນຂໍ້ຄົງຄ້າງ ທີ່ຕິດພັນກັບບົດບັນທຶກຜົນການກວດສອບ ແຕ່ລະປີ ໃຫ້ທ້ອງທ່າຫລຸດລົງ ແລະ ກ້າວໄປສູ່ການແກ້ໄຂສຳເລັດຂາດຕົວ.

+ ປີ 2022 ງວດ 3 ( ເດືອນ 7-9 ) :

- ສືບຕໍ່ ກວດກາ ແລະ ໄລ່ລຽງ ບັນດາບັນຊີເງິນຝາກບ້ວງເງິນງົບປະມານ ແລະ ບ້ວງລາຍຮັບວິຊາການ ຂອງບັນດາຫົວໜ່ວຍງົບປະມານ ທີ່ມີຍອດເຫລືອເງິນໃນບັນຊີເງິນຝາກຄັງເງິນ ໃນຂອບເຂດທົ່ວປະເທດ ເພື່ອສະສາງເຂົ້າເປັນລາຍຮັບງົບປະມານແຫ່ງລັດ ຕາມກົດໝາຍກຳນົດໄວ້;
- ສືບຕໍ່ ແນະນຳ, ຕິດຕາມ ແລະ ຊຸກຍູ້ ບັນດາຈຸດບໍລິການຮັບເງິນ ( ຂະແໜງໂຍທາ ແລະ ຊັບພະຍາກອນ ) ຢູ່ບັນດາແຂວງ ທີ່ຍັງບໍ່ທັນສຳເລັດ ເພື່ອນຳໃຊ້ໃນການຄຸ້ມຄອງການແຈ້ງ ແລະ ມອບລາຍຮັບງົບປະມານ ລວມທັງລາຍຮັບຈາກ ຄ່າທຳນຽມ ແລະ ຄ່າບໍລິການ ໃຫ້ຖືກຕ້ອງຕາມນິຕິກຳທີ່ໄດ້ກຳນົດໄວ້ ໂດຍຜ່ານລະບົບ TaxRIS ແລະ ຊຳລະຜ່ານເຄື່ອງມືທັນສະໄໝ ເພື່ອຫັນເປັນເທັກໂນໂລຊີການສື່ສານແບບໃໝ່ ເປັນຕົ້ນ ລະບົບ Mobile-Banking, M-Money, U-Money ແລະ ອື່ນໆ ໂດຍສືບຕໍ່ຈັດຕັ້ງຜັນຂະຫຍາຍຢູ່ບັນດາແຂວງໃນຂອບເຂດທົ່ວປະເທດ;
- ສືບຕໍ່ ຕິດຕາມ, ແນະນຳ ແລະ ກວດກາ ການຈັດຕັ້ງປະຕິບັດການນຳໃຊ້ລະບົບ RTIS ແລະ ໃບບິນຮັບເງິນຂອງຄັງເງິນ ຜ່ານລະບົບທະນາຄານ ເພື່ອຕິດຕາມ ແລະ ຄຸ້ມຄອງລາຍຮັບ ແລະ ລາຍຈ່າຍ ງົບປະມານແຫ່ງລັດໃຫ້ລວມສູນທຸກແຫລ່ງເງິນຢູ່ຂັ້ນສູນກາງ ແລະ ຕອບສະໜອງການຈັດສັນ ການແບ່ງຂັ້ນຄຸ້ມຄອງ ລະຫວ່າງສູນກາງ ແລະ ທ້ອງຖິ່ນ ໃຫ້ເປັນເອກະພາບໃນຄອບເຂດທົ່ວປະເທດ;
- ສືບຕໍ່ ດຳເນີນການກວດກາ ແລະ ສັງລວມຕົວເລກການເຄື່ອນໄຫວບັນຊີເງິນຝາກຄັງເງິນ ບ້ວງລາຍຮັບວິຊາການ ເພື່ອສັງລວມສິ່ງຂະແໜງສ່ວຍສາອາກອນ ແລະ ປະສານຫົວໜ່ວຍງົບປະມານ ເພື່ອດຳເນີນການແຈ້ງມອບເປັນລາຍຮັບງົບປະມານໃນແຕ່ລະເດືອນ;
- ສືບຕໍ່ ຕິດຕາມ, ກວດກາ, ສັງລວມ ແລະ ປະສານສົມທົບກັບບັນດາຫົວໜ່ວຍງົບປະມານ, ຄັງເງິນ ປະຈຳທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງ ເພື່ອຄົ້ນຄວ້າປັບປຸງມາດຕະຖານ ແລະ ວິທີແກ້ໄຂ ບັນດາບັນຫາທີ່ເປັນຂໍ້ຄົງຄ້າງ ທີ່ຕິດພັນກັບບົດບັນທຶກຜົນການກວດສອບ ແຕ່ລະປີ ໃຫ້ຫ້ວງທ່າຫລຸດລົງ ແລະ ກ້າວໄປສູ່ການແກ້ໄຂສຳເລັດຂາດຕົວ;
- ສືບຕໍ່ ລົງຊຸກຍູ້, ຕິດຕາມ ແລະ ແນະນຳ ຄັງເງິນປະຈຳເມືອງ ແລະ ໜ່ວຍງານຄັງເງິນເມືອງ ເພື່ອຫັນການແຈ້ງມອບຜ່ານລະບົບ TaxRIS ແລະ ຊຳລະຜ່ານລະບົບທະນາຄານ, ສຳລັບ ບັນດາເມືອງທີ່ບໍ່ມີໜ່ວຍບໍລິການຂອງທະນາຄານທຸລະກິດ ແມ່ນຫັນມານຳໃຊ້ການບໍລິການຂອງທະນາຄານນະໂຍບາຍ ຫລື ຊຳລະຜ່ານເຄື່ອນມືທັນສະໄໝ ເພື່ອຫັນເປັນເທັກໂນໂລຊີການສື່ສານແບບໃໝ່ ເປັນຕົ້ນ ລະບົບ Mobile-Banking, M-Money, U-Money ແລະ ອື່ນໆ ເພື່ອຢຸດຕິການຮັບເງິນເປັນເງິນສົດ.

+ ປີ 2022 ງວດ 4 ( ເດືອນ 10 - 12 ) :

- ສືບຕໍ່ ກວດກາ ແລະ ໄລ່ລຽງ ບັນດາບັນຊີເງິນຝາກບ້ວງເງິນງົບປະມານ ແລະ ບ້ວງລາຍຮັບວິຊາການ ຂອງບັນດາຫົວໜ່ວຍງົບປະມານ ທີ່ມີຍອດເຫລືອເງິນໃນບັນຊີເງິນຝາກຄັງເງິນ ໃນຂອບເຂດທົ່ວປະເທດ ເພື່ອສະສາງເຂົ້າເປັນລາຍຮັບງົບປະມານແຫ່ງລັດ ຕາມກົດໝາຍກຳນົດໄວ້;
- ສືບຕໍ່ ແນະນຳ, ຕິດຕາມ ແລະ ຊຸກຍູ້ ບັນດາຈຸດບໍລິການຮັບເງິນ ( ຂະແໜງໂຍທາ ແລະ ຊັບພະຍາກອນ ) ເພື່ອນຳໃຊ້ໃນການຄຸ້ມຄອງການແຈ້ງ ແລະ ມອບລາຍຮັບງົບປະມານ ລວມທັງລາຍຮັບຈາກ ຄ່າທຳນຽມ ແລະ ຄ່າບໍລິການ ໃຫ້ຖືກຕ້ອງຕາມນິຕິກຳທີ່ໄດ້ກຳນົດໄວ້ ໂດຍຜ່ານລະບົບ TaxRIS ແລະ ຊຳລະຜ່ານເຄື່ອງມືທັນສະໄໝ ເພື່ອຫັນເປັນເທັກໂນໂລຊີການສື່ສານແບບໃໝ່ ເປັນຕົ້ນ ລະບົບ Mobile-Banking, M-Money, U-Money ແລະ ອື່ນໆ ໂດຍສືບຕໍ່ຈັດຕັ້ງຜັນຂະຫຍາຍຢູ່ບັນດາແຂວງ ໃນຂອບເຂດທົ່ວປະເທດ;

- ສືບຕໍ່ ຕິດຕາມ, ແນະນຳ ແລະ ກວດກາ ການຈັດຕັ້ງປະຕິບັດການນຳໃຊ້ລະບົບ RTIS ແລະ ໃບບິນຮັບເງິນຂອງຄັງເງິນ ຜ່ານລະບົບທະນາຄານ ເພື່ອຕິດຕາມ ແລະ ຄຸ້ມຄອງ ລາຍຮັບ ແລະ ລາຍຈ່າຍ ງົບປະມານແຫ່ງລັດໃຫ້ລວມສູນທຸກແຫລ່ງເງິນຢູ່ຂັ້ນສູນກາງ ແລະ ຕອບສະໜອງການຈັດສັນ ການແບ່ງຂັ້ນຄຸ້ມຄອງ ລະຫວ່າງສູນກາງ ແລະ ທ້ອງຖິ່ນ ໃຫ້ເປັນເອກະພາບໃນຂອບເຂດທົ່ວປະເທດ;
- ສືບຕໍ່ ດຳເນີນການກວດກາ ແລະ ສັງລວມຕົວເລກການເຄື່ອນໄຫວບັນຊີເງິນຝາກຄັງເງິນ ບ້ວງລາຍຮັບວິຊາການ ເພື່ອສັງລວມສົ່ງຂະແໜງສ່ວຍສາອາກອນ ແລະ ປະສານສົມທົບກັບຫົວໜ່ວຍງົບປະມານ ເພື່ອດຳເນີນການແຈ້ງມອບເປັນລາຍຮັບງົບປະມານໃນແຕ່ລະເດືອນ;
- ສືບຕໍ່ ຕິດຕາມ, ກວດກາ, ສັງລວມ ແລະ ປະສານສົມທົບກັບບັນດາຫົວໜ່ວຍງົບປະມານ, ຄັງເງິນ ປະຈຳທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງ ເພື່ອຄົ້ນຄວ້າປັບປຸງມາດຕະຖານ ແລະ ວິທີແກ້ໄຂ ບັນດາບັນຫາທີ່ເປັນຂໍ້ຄົງຄ້າງ ທີ່ຕິດພັນກັບບົດບັນທຶກຜົນການກວດສອບ ແຕ່ລະປີ ໃຫ້ທ້ອງທ່າຫລຸດລົງ ແລະ ກ້າວໄປສູ່ການແກ້ໄຂສຳເລັດຂາດຕົວ;
- ສືບຕໍ່ ລົງຊຸກຍູ້, ຕິດຕາມ ແລະ ແນະນຳ ຄັງເງິນປະຈຳເມືອງ ແລະ ໜ່ວຍງານຄັງເງິນເມືອງ ເພື່ອຫັນການແຈ້ງມອບຜ່ານລະບົບ TaxRIS ແລະ ຊຳລະຜ່ານລະບົບທະນາຄານ, ສຳລັບ ບັນດາເມືອງທີ່ບໍ່ມີໜ່ວຍບໍລິການຂອງທະນາຄານທຸລະກິດ ແມ່ນຫັນມານຳໃຊ້ການບໍລິການຂອງທະນາຄານນະໂຍບາຍ ຫລື ຊຳລະຜ່ານເຄື່ອງມືທັນສະໄໝ ເພື່ອຫັນເປັນເທັກໂນໂລຊີການສືສານແບບໃໝ່ ເປັນຕົ້ນ ລະບົບ Mobile-Banking, M-Money, U-Money ແລະ ອື່ນໆ ເພື່ອຢຸດຕິການຮັບເງິນເປັນເງິນສົດ.

+ ປີ 2023 :

- ສືບຕໍ່ ດຳເນີນການກວດກາ ແລະ ສັງລວມຕົວເລກການເຄື່ອນໄຫວບັນຊີເງິນຝາກຄັງເງິນ ບ້ວງລາຍຮັບວິຊາການ ເພື່ອສັງລວມສົ່ງຂະແໜງສ່ວຍສາອາກອນ ແລະ ປະສານຫົວໜ່ວຍງົບປະມານ ເພື່ອດຳເນີນການແຈ້ງມອບເປັນລາຍຮັບງົບປະມານໃນແຕ່ລະເດືອນ;
- ສືບຕໍ່ ກວດກາ ແລະ ໄລ່ລຽງ ບັນດາບັນຊີເງິນຝາກບ້ວງເງິນງົບປະມານ ແລະ ບ້ວງລາຍຮັບວິຊາການ ຂອງບັນດາຫົວໜ່ວຍງົບປະມານ ທີ່ມີຍອດເຫລືອເງິນໃນບັນຊີເງິນຝາກຄັງເງິນ ໃນຂອບເຂດທົ່ວປະເທດ ເພື່ອສະສາງເຂົ້າເປັນລາຍຮັບງົບປະມານແຫ່ງລັດ ຕາມກົດໝາຍກຳນົດໄວ້;
- ສືບຕໍ່ ຕິດຕາມ, ຊຸກຍູ້, ແນະນຳ ແລະ ກວດກາ ການຈັດຕັ້ງປະຕິບັດການນຳໃຊ້ລະບົບ RTIS ແລະ ໃບບິນຮັບເງິນຂອງຄັງເງິນ ຜ່ານລະບົບທະນາຄານ ເພື່ອຕິດຕາມ ແລະ ຄຸ້ມຄອງລາຍຮັບ ແລະ ລາຍຈ່າຍ ງົບປະມານແຫ່ງລັດ ໃຫ້ລວມສູນທຸກແຫລ່ງເງິນຢູ່ຂັ້ນສູນກາງ ແລະ ຕອບສະໜອງການຈັດສັນ ການແບ່ງຂັ້ນຄຸ້ມຄອງ ລະຫວ່າງສູນກາງ ແລະ ທ້ອງຖິ່ນ ໃຫ້ເປັນເອກະພາບໃນຂອບເຂດທົ່ວປະເທດ;
- ກວດກາ, ຊຸກຍູ້ ແລະ ປະສານສົມທົບກັບບັນດາຂະແໜງລາຍຮັບ ແລະ ທະນາຄານທຸລະກິດ ທີ່ໃຫ້ບໍລິການເພື່ອສົມທຽບຕົວເລກການປະຕິບັດລາຍຮັບງົບປະມານ ໃຫ້ຮີບຮ້ອນແກ້ໄຂ ແລະ ສະສາງບັນຊີລາຍການຮັບລໍຖ້າຈັດສັນ ແລະ ສະສາງ (ບັນຊີ 547) ໃຫ້ສຳເລັດໃນເດືອນ. ກໍລະນີ ເນື້ອໃນລາຍການຮັບບໍ່ຊັດເຈນ ແມ່ນບັນທຶກເປັນລາຍຮັບອື່ນ ແລ້ວຈິ່ງດຳເນີນການໄລ່ລຽງ ແລະ ດັດແກ້ບັນຊີ ຕາມເນື້ອໃນລາຍຮັບງົບປະມານເກີດຂຶ້ນຕົວຈິງໃນທ້າຍເດືອນ;
- ສືບຕໍ່ ຕິດຕາມ, ກວດກາ, ສັງລວມ ແລະ ປະສານສົມທົບກັບບັນດາຫົວໜ່ວຍງົບປະມານ, ຄັງເງິນ ປະຈຳທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງ ເພື່ອຄົ້ນຄວ້າປັບປຸງມາດຕະຖານ ແລະ ວິທີແກ້ໄຂ ບັນດາບັນຫາທີ່ເປັນຂໍ້ຄົງຄ້າງ ທີ່ຕິດພັນກັບບົດບັນທຶກຜົນການກວດສອບ ແຕ່ລະປີ ໃຫ້ທ້ອງທ່າຫລຸດລົງ ແລະ ກ້າວໄປສູ່ການແກ້ໄຂສຳເລັດຂາດຕົວ.

- ສືບຕໍ່ ລົງຊຸກຍູ້, ຕິດຕາມ ແລະ ແນະນຳ ຄັງເງິນປະຈຳເມືອງ ແລະ ໜ່ວຍງານຄັງເງິນເມືອງ ທີ່ຍັງບໍ່ທັນສຳເລັດ ເພື່ອຫັນການແຈ້ງມອບຜ່ານລະບົບ TaxRIS ແລະ ຊຳລະຜ່ານລະບົບທະນາຄານ, ສຳລັບ ບັນດາເມືອງທີ່ບໍ່ມີ ໜ່ວຍບໍລິການຂອງທະນາຄານທຸລະກິດ ແມ່ນຫັນມານຳໃຊ້ການບໍລິການຂອງທະນາຄານນະໂຍບາຍ ຫລື ຊຳລະຜ່ານເຄື່ອງມືທັນສະໄໝ ເພື່ອຫັນເປັນເທັກໂນໂລຊີການສື່ສານແບບໃໝ່ ເປັນຕົ້ນ ລະບົບ Mobile-Banking, M-Money, U-Money ແລະ ອື່ນໆ ເພື່ອຢຸດຕິການຮັບເງິນເປັນເງິນສົດ.

**3. ມາດຕະການຈັດຕັ້ງປະຕິບັດ**

- ຄະນະນຳຄັງເງິນ ທີ່ຮັບຜິດຊອບນຳພາ-ຊີ້ນຳ ແຕ່ລະພະແນກ, ບັນດາຫົວໜ້າ, ຮອງຫົວໜ້າພະແນກ ເປັນເຈົ້າການຮັບຜິດຊອບນຳພາຈັດຕັ້ງປະຕິບັດຜັນຂະຫຍາຍແຜນດຳເນີນງານ, ກະກຽມຜັນຂະຫຍາຍເປັນແຜນວຽກຈຸດສຸມລະອຽດເຂົ້າໃນແຜນວຽກຂອງແຕ່ລະພະແນກ ໃນແຕ່ລະເດືອນ ທີ່ຕິດພັນ ໂດຍກຳນົດເປັນວຽກເພີ່ມເຕີມສະເພາະ ເພື່ອພ້ອມກັນຈັດຕັ້ງປະຕິບັດໃຫ້ສອດຄ່ອງ ແລະ ມີຜົນສຳເລັດ;
- ຄະນະນຳຄັງເງິນ ຮັບຜິດຊອບຕິດຕາມ, ກວດກາ ແລະ ປະເມີນຜົນ, ຕີລາຄາຄວາມຮັບຜິດຊອບລວມ ແລະ ຄວາມຮັບຜິດຊອບສະເພາະຂອງບັນດາທ່ານຫົວໜ້າ, ຮອງຫົວໜ້າພະແນກ ແລະ ວິຊາການ ທີ່ຖືກມອບໝາຍໃຫ້ຮັບຜິດຊອບ ຈັດຕັ້ງປະຕິບັດແຜນງານດັ່ງກ່າວ ໃຫ້ມີປະສິດທິຜົນເປັນຢ່າງດີ;
- ມອບໃຫ້ຫົວໜ້າ, ຮອງຫົວໜ້າ ພະແນກກ່ຽວຂ້ອງ ເປັນເຈົ້າການຜັນຂະຫຍາຍບັນດາໜ້າວຽກສ້າງເປັນແຜນວຽກຈຸດສຸມຮີບດ່ວນ ແລະ ເອົາໃຈໃສ່ພ້ອມກັນຕັ້ງໜ້າຈັດຕັ້ງປະຕິບັດໃຫ້ສຳເລັດຕາມແຜນການກຳນົດໄວ້;
- ຄະນະນຳຄັງເງິນ, ບັນດາຫົວໜ້າ, ຮອງຫົວໜ້າພະແນກ ຕ້ອງໄດ້ມີການຕິດຕາມ, ຊຸກຍູ້, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ ເປັນແຕ່ລະໄລຍະຢ່າງເຂັ້ມງວດ.

ດັ່ງນັ້ນ, ຈຶ່ງຮຽນຈີງສ້າງແຜນດຳເນີນງານດັ່ງກ່າວ ເປັນບ່ອນອີງໃນການຕິດຕາມການຈັດຕັ້ງປະຕິບັດ.

**ຫົວໜ້າຄັງເງິນແຫ່ງຊາດ;**

ກະຊວງການເງິນ ຄັງເງິນແຫ່ງຊາດ

ນ.ວັນພອນ ພິມມະສອນ